# ມາລາກີ

## ຄຳສັນຍາເດີມເຖິງຄຳສັນຍາໃໝ່

| | |
|---|---|
| ໃຈຄວາມສຳຄັນ | ການຈັດແຈ່ງ |
| ຂໍ້ຄວາມສຳຄັນ | ໓:໗ |
| ຈຳນວນບົດ | ໔ ບົດ |
| ເຣື່ອງເກີດຂຶ້ນແຕ່ປີ | ໔໓໒ ຈົນເຖິງປີ ໔໒໔ ກ່ອນ ຄ.ສ. |
| ປະຈຳຢູ່ທີ່ | ເຢຣູຊາເລັມ |
| ຈັກກະພັດທີ່ມີອຳນາດ | ເປເຣເຊ |
| ມາລາກີ ແປວ່າ | ຜູ້ຮັບໃຊ້ຂອງເຮົາ (ຜູ້ສົ່ງຂ່າວ) |
| ຜູ້ທຳນວາຍທີ່ | ໑໕ |

(ເຊີນເບິ່ງໜັງສືເນເຫມີດ້ວຍກັນ)

### ໑. ວ່າດ້ວຍປວັດແລະຄາວສໄມຂອງມາລາກີ

ເຣື່ອງຂອງມາລາກີນັ້ນພວກເຮົາບໍ່ຮູ້ຄັກ ຮູ້ແຕ່ພຽງວ່າເພິ່ນເປັນຜູ້ທຳນວາຍຄົນສຸດທ້າຍໃນພຣະຄັມພີເດີມ ເພິ່ນໄດ້ດຳເນີນຊີວິດຢູ່ໃນຄາວດຽວກັນກັບ ເນເຫມີ (໓:໘-໑໐ ກັບເນເຫມີ ໑໓:໑໐-໑໒ ບົດທີ ໒:໘ ກັບເນເຫມີ ໑໓:໒໙)

## ໖. ວ່າດ້ວຍເນື້ອຄວາມ

໑. ພຣະເຈົ້າຊົງສແດງຄວາມຮັກແກ່ພວກອິສຣາເອັນດ້ວຍການ ຄັດເລືອກເອົາຢາໂຄບແທນເອຊາອິ ແຕ່ພວກອິສຣາເອັນ ບໍ່ໄດ້ຕອບແທນແກ່ຄວາມຮັກນັ້ນ ບົດ ໑:໒–໕

໒. ພຣະເຈົ້າຈະຊົງພິພາກສາ ແລະຊຳຣະພວກຂອງພຣະອົງໂດຍ ທາງຜູ້ຮັບໃຊ້ຂອງພຣະອົງທີ່ຈະເກີດມີມາພາຍໃນ ໔໐໐ ປີ ຄືໂຍຮັນບັບຕິໂຕ ສ່ວນມາຣາກີຜູ້ຂຽນພຣະຄັມພີເດີມຄົນ ສຸດທ້າຍກໍເປັນຜູ້ທີ່ເຮັດໃຫ້ຄວາມປາກົດຂອງພຣະຄັມພີເດີມ ສືບຕໍ່ກັບພຣະຄັມພີໃໝ່ ການປະຕິບັດພຣະເຈົ້າ ຂອງພວກ ປຸດາໃນເວລານັ້ນໄດ້ເສື່ອມຊາມລົງ ພວກເຂົາໄດ້ກະທຳບໍ່ ດີບໍ່ງາມແກ່ພຣະເຈົ້າຫລາຍຢ່າງຄື

ກ. ພວກມະຫາ ປະໂລຫິດ ບໍ່ເອົາ ໃຈໃສ່ ໃນຄວາມ ບໍຣິສຸດ ຂອງພຣະວິຫານ ບົດ ໑:໗,໑໐

ຂ. ພົລເມືອງ ຖວາຍ ຂອງ ບໍ່ດີ ບູຊາ ແລະ ບໍ່ສັດຊື່ ໃນການ ຖວາຍຮ້ອຍຊັກສິບ ບົດ ໑:໘;໓:໘

ຄ. ພວກເຂົາໄດ້ເອົາຊາວຕ່າງປະເທດເປັນເມັຍ ບົດ ໒:໑໐–໑໖

## ໗. ການແບ່ງເປັນພາກ

ພາກທີ ໑ ບາບຂອງພວກປະໂລຫິດ ບົດ ໑:–໒:໙

ພາກທີ ໒ ບາບຂອງພວກຣາສດອນ ບົດ ໒:໑໐–໑໗

ພາກທີ ໓ ຄວາມປາກົດກ່ຽວກັບຜູ້ຮັບໃຊ້ຂອງພຣະເຈົ້າ ບົດ ໓:໑–໖

ພາກທີ ໔ ຈົ່ງຫລັບມາຫາເຮົາກ່ອນ ຈະເຖິງວັນແຫ່ງພຣະເຢໂຮວາ ບົດ ໓:໗–໔:໖

## ໔. ວ່າດ້ວຍຜູ້ຮັບໃຊ້ທັງຫລາຍໃນໜັງສືມາລາກີ

໑. ມາລາກີ ບົດທີ ໑:໑

໒. ປະໂລຫິດຜູ້ມີປັນຍາ ບົດທີ ໒:໗

໓. ໂຢຮັນບັບຕິໂຕ ບົດທີ ໓:໑–໔

໔. ທູດສວັນຂອງຄຳສັນຍາ ຄືເມຊີອາ ບົດທີ ໓:໑

໕. ທ່ານເອລີ ບົດທີ ໔:໕